# ບັນທຶກໂຄງການຂໍການສະໜັບສະໜູນກັບອົງການປົກຄອງທ້ອງຖິ່ນ




| ID: | Author: | Organization: | Created date: |
|---|---|---|---|
| 87 | APL | APL+ | 2020-05-26 00:00:00 |

### 1. ກ່ຽວກັບສະພາບບັນຫາທີ່ໂຄງການຢາກຈະແກ້ໄຂ / About the problem that project want to solve.

ອີງຕາມຜົນຂອງການລົງເກັບກຳຂໍ້ມູນເບື້ອງຕົ້ນ , ຄັ້ງວັນທີ 29/1-4/2/2019.

- ບ້ານ ແກ້ງໂດນ, ເມືອງ ຄົງເຊໂດນ ແຂວງ ສາລະວັນ, ປະກອບມີ 135 ຄອບຄົວ,ຈຳນວນພົນລະເມືອງທັງໝົດ 695 ຄົນ,ຍິງ 333 ຄົນ,ຊາວໜຸ່ມ 58 ຍິງ:33 ຄົນ
- ບ້ານດອນມ່ວງ ເມືອງທ່າແຂກ ແຂວງຄຳມ່ວນ ປະກອບມີ 86 ຄອບຄົວ ປະຊາກອນ 252 ຄົນ,ຊາວໜຸ່ມ 35 ຄົນ, ຍິງ 19 ຄົນ.

ບັນຫາ:

1. ຊາວໜຸ່ມບ້ານ ຍັງບໍ່ເຂົ້າໃຈຢ່າງທ່ອງແທ້ກ່ຽວກັບ ບົດບາດຍິງ-ຊາຍ.
2. ບັນຫາຢາເສບຕິດ ແລະ ຄວາມຮຸນແຮງໃນຊຸມຊົນ.
3. ບັນຫາເລື່ອງສຸຂະພາບ ໂດຍສະເພາະ ເລື່ອງເຊື້ອເອສໄອວີເອດ.
4. ບັນຫາການວ່າງງານ ແລະ ອື່ນໆ

## 2. ໂຄງການໄດ້ເຮັດຫຍັງແດ່ເພື່ອແກ້ໄຂບັນຫາ / About how the project solve the problems

1. ຄັດເລືອກຕົວແທນ ສ້າງອາສາສະໝັກ ຫຼື ຜູ້ຕາງໜ້າຊຸມຊົນ ຂອງຊາວໜຸ່ມປະຈຳບ້ານ.
2. ຝຶກອົບຮົມ ທັກສະການເປັນຜູ້ນຳຊຸມຊົນ, ເລື່ອງບົດບາດຍິງຊາຍ, ເລື່ອງເຮສໄອວີເອດ ລວມທັງ ການນຳໃຊ້ເຄື່ອງມື ກາວ (GALS)-ໄທບ້ານເຮັດການຄົ້ນຄວ້າ(Thaibaan research)ຂັ້ນພື້ນຖານ ແລະ  ການເປັນຜູ້ຕາງໜ້າຊຸມຊົນທີ່ດີ.
3. ຝຶກອົບຮົມ ການນຳໃຊ້ແບບຟອມສອບຖາມ
4. ເກັບກຳຂໍ້ມູນ ແລະ ປະຕິບັດການຕົວຈິງພາກສະໜາມ

## 3. ຜົນສຳເລັດຂອງໂຄງການ / Results of the project

1. ໄດ້ມີອາສາສະໝັກຂອງໂຄງການ ຢູ່ບ້ານດອນມ່ວງ 10 ແລະ ບ້ານແກ້ງໂຄນ 10 ຄົນ, ລວມເປັນ 20 ຄົນ ທີ່ເປັນໄວໜຸ່ມ
2. ສຳເລັດການຝຶກອົບຮົມຫົວຂໍ້ຕ່າງໆ ເຊັ່ນ ການເປັນຜູ້ນຳຊຸມຊົນທີ່ດີ,  ການນຳໃຊ້ເຄື່ອງມື ກາວ (GALS)-ໄທບ້ານເຮັດການຄົ້ນຄວ້າ(Thaibaan research)
3. ອາສາສະໝັກ ໄດ້ລົງເກັບກຳຂໍ້ມູນພາກສະໜາມ ໂດຍການນຳໃຊ້ແບບຟອມສອບຖາມ
4. ມີລາຍງານ ແລະ ຖານຂໍ້ມູນ ເປັນວີດີໂອ ກໍລະນີສຶກສາ

## 4. ປັດໄຈສູ່ຜົນສຳເລັດ / Factors of success

- ໄດ້ເອົາຊຸມຊົນກຸ່ມເປົ້າໝາຍເປັນຈຸດໃຈກາງໃນການຮຽນຮູ້ບັນຫາ
- ຊຸມຊົນເປັນຄົນຄິດ ແລະ ກຳນົດບັນຫາດ້ວຍຕົວຊຸມຊົນເອງ
- ຊຸມຊົນເປັນຜູ້ອອກແບບ ແລະ ຊອກຫາວິທີທາງແກ້ໄຂດ້ວຍຕົວເຂົາເຈົ້າເອງ,
- ຄູ່ຮ່ວມງານ ,ອຳນາດການປົກຄອງຂັ້ນທ້ອງຖິ່ນເຫັນຄວາມສຳຄັນ ແລະ ໃຫ້ຄວາມຮ່ວມມືເປັນຢ່າງດີ
- ທີມງານເອົາໃຈໃສ່ ແລະມີຄວາມກະຕືລືລົ້ນໃນໜ້າວຽກ
- ມີງົບປະມານສະໜັບສະໜູນຈາກ (OXFAM)

## 5. ຂໍ້ຈຳກັດທີ່ເຮັດໃຫ້ບໍ່ສຳເລັດຜົນໄດ້ດີ / Limitations

1. ຄວາມອາຍ, ຊາວໜຸ່ມ ແລະ ໄວໜຸ່ມຍັງມີການເຂີນອາຍ ຄວາມກ້າຫານໃນການສະແດງອອກຍັງມີໜ້ອຍ
2. ອາຊີບຂອງໄວໜຸ່ມສ່ວນໃຫຍ່ ແມ່ນເຮັດວຽກລາຍວັນ(ເປັນກຳມະກອນ ຫາເຊົ້າກິນຄ່ຳ) ກໍເປັນບັນຫາສ່ວນໜຶ່ງ ທີ່ເຮັດໃຫ້ເຂົາເຈົ້າມີເວລາຈຳກັດ ເຊິ່ງມັນມີຜົນຕໍ່ກັບການເຮັດວຽກໃນຮູບແບບຂອງການເປັນອາສາສະໝັກ
3. ເກີດໂລກລະບາດພະຍາດໂຄວິດ 19(COVID 19)
4. ໂຄງການຍັງເປັນໄລຍະສັ້ນ

## 6. ຂໍ້ແນະນຳສຳລັບຜູ້ທີ່ສົນໃຈຢາກທົດລອງນຳໃຊ້ / Recommendations for scaling up

1. ເພື່ອຄວາມຍືນຍົງ ຖ້າເປັນໄປໄດ້ ຢາກໃຫ້ບ້ານມີກອງປະຊຸມສ່ອງແສງປະຈຳໄຕມາດ ເຊິ່ງໃຫ້ມີ 3 ຫຼື 6 ເດືອນຄັ້ງ, ໂດຍມີຜູ້ແທນຈາກສະພາ ນັ່ງເປັນປະທານໃນກອງປະຊຸມ .
2. ຝຶກ ຫຼື ສ້າງສີມືແຮງງານ ແລະ ການຕະຫຼາດໃຫ້ແກ່ຊາວໜຸ່ມ-ໄວໜຸ່ມພາຍໃນກຸ່ມບ້ານ
3. ການອອກແບບກິດຈະກຳ ໃຫ້ແທດເໝາະກັບຊຸມຊົນເປົ້າໝາຍ ຄຳສັບຕ່າງໆ ພາສາປາກເວົ້າ ສື່ໂຄສະນາສັ້ນໆ ແຕ່ໄດ້ໃຈຄວາມ
4. ເກັບກຳຂໍ້ມູນເບິ່ງຄວາມປ່ຽນແປງ ໃນລະຍະ 1 ປີຫຼັງໂຄງການ







